

# ຊົມເຊີຍ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮັບລາງວັນທະນາຄານດີເດັ່ນດ້ານການດຳເນີນງານ ວຽກງານການໂອນເງິນລະຫວ່າງປະເທດປະຈຳປີ 2016 (Operational Excellence Award)

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນໄດ້ຮັບລາງວັນ ທະນາຄານດີເດັ່ນດ້ານການດຳເນີນງານ, ວຽກງານການໂອນເງິນລະຫວ່າງປະເທດປະຈຳປີ 2016 ເຊິ່ງຈັດ ແລະ ມອບລາງວັນໂດຍທະນາຄານ Wells Fargo ສະຖາບັນການເງິນທີ່ໃຫຍ່ທີ່ສຸດອັບດັບ 5 ຂອງປະເທດອາເມລິກາ.

ທຄຕລ ເປັນທະນາຄານແຫ່ງດຽວໃນ ສປປ ລາວ ແລະ ເປັນທະນາຄານ 1 ໃນ 5 ທະນາຄານໃນອາຊຽນທີ່ໄດ້ຮັບລາງວັນເຊິ່ງເປັນລາງວັນອັນຊົງກຽດ ແລະ ມີຄຸນຄ່າຢ່າງຍິ່ງສຳລັບ ທຄຕລ.

ລາງວັນ ທຄຕລ ໄດ້ຮັບຄັ້ງນີ້ເປັນສິ່ງຢັ້ງຢືນເຖິງຄຸນນະພາບ ແລະ ເປັນທີ່ຍອມຮັບຂອງສາກົນໃນດ້ານການດຳເນີນງານໂອນເງິນລະຫວ່າງປະເທດຂອງ ທຄຕລ. ການຕັດສິນການໄດ້ຮັບລາງວັນແມ່ນຕັດສິນຈາກຕົວເລກຜົນການດຳເນີນງານຂອງ ທຄຕລ ໃນປີ 2016.



ຕົວແທນຂອງ ທະນາຄານ Wells Fargo ເຂົ້າມາມອບລາງວັນອັນຊົງກຽດດັ່ງກ່າວ ຕາງໜ້າ ທຄຕລ
ຮັບໂດຍ ທ່ານ ລາໃຈ ຄັນພຣະວົງສ໌, ຮອງຜູ້ອຳນວຍການໃຫຍ່ ທຄຕລ